ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ: 019 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 22 DEC 2014

# ລະບຽບ
# ວ່າດ້ວຍການອອກຈຳໜ່າຍຮຸ້ນກູ້

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 1532/ສຄຄຊ, ລົງວັນທີ 10 ທັນວາ 2014.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ເພື່ອລະດົມທຶນຂອງບໍລິສັດ ຢູ່ ສປປ ລາວ ແນໃສ່ເຮັດໃຫ້ການເຄື່ອນໄຫວດັ່ງກ່າວມີຄວາມຮັບປະກັນ, ເປັນລະບຽບຮຽບຮ້ອຍ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

**ມາດຕາ 2 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນລະບຽບສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍລິສັດອອກຈຳໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການນຳເອົາຮຸ້ນກູ້ຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ;
2. **ບໍລິສັດກວດສອບ** ໝາຍເຖິງ ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ບໍລິການກວດສອບ ໃນຂົງເຂດວຽກງານຫຼັກຊັບ;

3. **ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບ ການຮັບຮອງ ຫຼື ອະນຸຍາດ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເປັນ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືໃນຂົງເຂດວຽກງານຫຼັກຊັບ;
4. **ທີ່ປຶກສາດ້ານການເງິນ** ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເປັນ ທີ່ປຶກສາດ້ານການເງິນ;
5. **ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດຫຼັກຊັບຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ເຮັດໜ້າທີ່ເປັນຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້;
6. **ຜູ້ຄໍ້າປະກັນການຊຳລະໜີ້** ໝາຍເຖິງ ທະນາຄານທຸລະກິດ ທີ່ມີການຈັດລຳດັບຄວາມໜ້າເຊື່ອຖື ທີ່ໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ສະຖາບັນການເງິນອື່ນ ຕາມການເຫັນດີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. **ຜູ້ປະເມີນຊັບສິນ** ໝາຍເຖິງ ຄະນະປະເມີນຊັບສິນ ຫຼື ບໍລິສັດປະເມີນຊັບສິນ ທີ່ໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດອຳນາດ ພ້ອມທັງໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
8. **ຜູ້ມີອຳນາດຄວບຄຸມ** ໝາຍເຖິງ ຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຫຼາຍກວ່າ ຊາວຫ້າສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ຫຼື ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການຂອງບໍລິສັດ ທີ່ມີສ່ວນກ່ຽວຂ້ອງກັບການກຳນົດນະໂຍບາຍ, ການບໍລິຫານ ຫຼື ການເຄື່ອນໄຫວທຸລະກິດທີ່ສຳຄັນຂອງບໍລິສັດອອກຈຳໜ່າຍຮຸ້ນກູ້;
9. **ໃບຢັ້ງຢືນການຖືຄອງຮຸ້ນກູ້** ໝາຍເຖິງ ໜັງສືແຈ້ງໃຫ້ຜູ້ລົງທຶນ ຊາບກ່ຽວກັບຜົນການຊື້ຮຸ້ນກູ້, ເງື່ອນໄຂຮຸ້ນກູ້ ແລະ ສິດຂອງຜູ້ລົງທຶນ;
10. **ໃບຮຸ້ນກູ້ລວມ ໝາຍເຖິງ** ໃບຮຸ້ນກູ້ທີ່ບໍ່ໄດ້ບົ່ງຊື່ຂອງຜູ້ຖື ຊຶ່ງບໍລິສັດອອກຈຳໜ່າຍຮຸ້ນກູ້ຕ້ອງນຳໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ.

**ມາດຕາ 3 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ທະນາຄານດູແລຊັບສິນ, ທະນາຄານທຸລະກິດ, ຜູ້ປະເມີນຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນກ່ຽວຂ້ອງທີ່ມີສ່ວນຮ່ວມໃນການອອກຈຳໜ່າຍຮຸ້ນກູ້ ຢູ່ ສປປ ລາວ.

**ມາດຕາ 4 ຄຸນລັກສະນະຂອງຮຸ້ນກູ້**

ຮຸ້ນກູ້ ຕ້ອງມີຄຸນລັກສະນະພື້ນຖານ ດັ່ງນີ້:
1. ສາມາດຊື້-ຂາຍ ແລະ ປ່ຽນມືໄດ້;
2. ມີຜົນຕອບແທນ;
3. ມີອາຍຸ 1, 3, 5, 7, 10 ຫຼື 15 ປີ;

4. ເປັນສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດ ຕາມການອະນຸຍາດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ມູນຄ່າກຳນົດ ໃນໃບຮຸ້ນກູ້ ບໍ່ໃຫ້ຫຼຸດໜຶ່ງລ້ານກີບ.

**ມາດຕາ 5 ໃບຮຸ້ນກູ້ລວມ ແລະ ໃບຢັ້ງຢືນການຖືຄອງຮຸ້ນກູ້**

ໃບຮຸ້ນກູ້ລວມ ແລະ ໃບຢັ້ງຢືນການຖືຄອງຮຸ້ນກູ້ ຕ້ອງມີຂໍ້ມູນຕົ້ນຕໍ ດັ່ງນີ້:

1. ຊື່ບໍລິສັດອອກຈຳໜ່າຍຮຸ້ນກູ້;
2. ເລກທີໃບທະບຽນວິສາຫະກິດ ຂອງບໍລິສັດອອກຈຳໜ່າຍຮຸ້ນກູ້;
3. ເລກທີໃບຮຸ້ນກູ້;
4. ວັນທີ, ເດືອນ, ປີ ຂຶ້ນທະບຽນໃບຮຸ້ນກູ້ ນຳສູນຮັບຝາກຫຼັກຊັບ;
5. ປະເພດຂອງຮຸ້ນກູ້;
6. ອາຍຸ ແລະ ວັນທີ, ເດືອນ, ປີ ຄົບກຳນົດເວລາໄຖ່ຖອນຂອງຮຸ້ນກູ້;
7. ຜົນຕອບແທນ;
8. ຈຳນວນຮຸ້ນກູ້;
9. ມູນຄ່າກຳນົດໃນໃບຮຸ້ນກູ້;
10. ມູນຄ່າລວມຂອງຮຸ້ນກູ້ທັງໝົດ;
11. ວິທີການ, ສະຖານທີ່, ກຳນົດເວລາໃນການຊຳລະຕົ້ນທຶນ ແລະ ດອກເບ້ຍ;
12. ລາຍເຊັນຂອງ ຜູ້ມີສິດອຳນາດ ແລະ ຕາປະທັບຂອງ ບໍລິສັດອອກຈຳໜ່າຍຮຸ້ນກູ້;
13. ສິດຂອງຜູ້ຖືຮຸ້ນກູ້.

**ມາດຕາ 6 ຮູບແບບການອອກຈຳໜ່າຍຮຸ້ນກູ້**

ການອອກຈຳໜ່າຍຮຸ້ນກູ້ ມີ ສອງ ຮູບແບບ ຄື ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແລະ ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ.

## ໝວດທີ 2
## ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ

**ມາດຕາ 7 ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແມ່ນການອອກຈຳໜ່າຍຮຸ້ນກູ້ ຄັ້ງທຳອິດ ຫຼື ການອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ ແລະ ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນສະເພາະໃດໜຶ່ງ ຊຶ່ງມີຜູ້ລົງທຶນຫຼາຍກວ່າໜຶ່ງຮ້ອຍລາຍຂຶ້ນໄປ.

**ມາດຕາ 8 ເງື່ອນໄຂການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດມະຫາຊົນ ຫຼື ບໍລິສັດຈຳກັດ (ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ);

2. ສ້າງຕັ້ງ ແລະ ເຄື່ອນໄຫວຢ່າງໜ້ອຍ ສາມປີ ຍົກເວັ້ນ ກໍລະນີ ບໍລິສັດມີການແຍກ, ຄວບ ຫຼື ຫັນເປັນບໍລິສັດຮູບແບບໃໝ່ ຈາກວິສາຫະກິດ ຫຼື ບໍລິສັດເດີມທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢ່າງໜ້ອຍສາມປີ;
3. ມີແຜນການລະດົມທຶນ ແລະ ແຜນການນຳໃຊ້ທຶນ ໂດຍຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ;
4. ມີເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
5. ມີທະນາຄານດູແລຊັບສິນ ເປັນຜູ້ຕິດຕາມ ແລະ ດູແລຜົນປະໂຫຍດຂອງຜູ້ຖືຮຸ້ນກູ້;
6. ມີກຳໄລສະເລ່ຍ ສາມປີ ຄືນຫຼັງພຽງພໍ ສຳລັບການຊຳລະດອກເບ້ຍຮຸ້ນກູ້ທັງໝົດ ໃນໜຶ່ງປີຕໍ່ໜ້າ;
7. ມີແຜນການຊຳລະຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສຳລັບການຊຳລະດັ່ງກ່າວ;
8. ມີການຈັດລຳດັບຄວາມໜ້າເຊື່ອຖື ຫຼື ມີຜູ້ຄ້ຳປະກັນການຊຳລະໜີ້. ກໍລະນີ ຜົນການຈັດລຳດັບຄວາມໜ້າເຊື່ອຖືຫາກຕ່ຳກວ່າ BBB ຕ້ອງມີຜູ້ຄ້ຳປະກັນການຊຳລະໜີ້;
9. ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍຂອງຮຸ້ນກູ້ໃນບ້ວງທີ່ອອກຜ່ານມາ ຕາມກຳນົດເວລາໃນການຊຳລະ ກໍລະນີ ທີ່ມີການອອກຈຳໜ່າຍຮຸ້ນກູ້ເພີ່ມ;
10. ສຳລັບ ການອອກຈຳໜ່າຍຮຸ້ນກູ້ເພີ່ມ ຕ້ອງມີຍອດເຫຼືອຮຸ້ນກູ້ທັງໝົດ ຊຶ່ງຕ່ຳກວ່າ ສາມສິບສ່ວນຮ້ອຍ ຂອງມູນຄ່າຊັບສິນສຸດທິ ຕາມໃບສະຫຼຸບຊັບສິນບັດປີຫຼ້າສຸດ ກ່ອນຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
11. ມີເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 9 ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄຳຮ້ອງຂໍອອກຈຳໜ່າຍຮຸ້ນກູ້ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາໃບທະບຽນສຳປະທານ ກໍລະນີ ເປັນທຸລະກິດສຳປະທານ;
3. ສຳເນົາໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ;
4. ສຳເນົາກົດລະບຽບຂອງບໍລິສັດ;
5. ມະຕິກອງປະຊຸມຜູ້ຖືຮຸ້ນທີ່ຮັບຮອງກ່ຽວກັບການອອກຈຳໜ່າຍຮຸ້ນກູ້;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ໜຶ່ງສ່ວນຮ້ອຍຂຶ້ນໄປ;
7. ໃບຢັ້ງຢືນຄວາມພ້ອມການອອກຈຳໜ່າຍຮຸ້ນກູ້ຈາກ ທີ່ປຶກສາດ້ານການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້;

8. ບົດລາຍງານການປະເມີນມູນຄ່າຊັບສິນ ໂດຍໄດ້ຮັບການຮັບຮອງຈາກຜູ້ປະເມີນຊັບສິນ.
9. ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;
10. ເອກະສານ ກ່ຽວກັບແຜນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສໍາລັບການຊໍາລະດັ່ງກ່າວ;
11. ໜັງສືຊວນຊື້;
12. ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ລະຫວ່າງ ບໍລິສັດອອກຈໍາໜ່າຍຮຸ້ນກູ້ ກັບ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້;
13. ສັນຍາກັບທະນາຄານດູແລຊັບສິນ ເພື່ອເຮັດໜ້າທີ່ເປັນຜູ້ຕິດຕາມ ແລະ ດູແລຜົນປະໂຫຍດຂອງຜູ້ຖືຮຸ້ນກູ້;
14. ບົດລາຍງານການຈັດລໍາດັບຄວາມໜ້າເຊື່ອຖືຈາກ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ກໍລະນີ ບໍລິສັດອອກຈໍາໜ່າຍຮຸ້ນກູ້ ບໍ່ມີຜູ້ຄໍ້າປະກັນການຊໍາລະໜີ້;
15. ສັນຍາຄໍ້າປະກັນການຊໍາລະໜີ້ຈາກ ຜູ້ຄໍ້າປະກັນການຊໍາລະໜີ້ ກໍລະນີ ບໍລິສັດອອກຈໍາໜ່າຍຮຸ້ນກູ້ບໍ່ໄດ້ຈັດລໍາດັບຄວາມໜ້າເຊື່ອຖື ຫຼື ຜົນການຈັດລໍາດັບຄວາມໜ້າເຊື່ອຖືຫາກຕໍ່າກວ່າ BBB;
16. ເອກະສານອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ຕ້ອງຮ່ວມກັບທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນໃນແຕ່ລະຄັ້ງ ຊຶ່ງຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບັນຈຸໄວ້ໃນເອກະສານດັ່ງກ່າວ ພ້ອມທັງເກັບຮັກສາເອກະສານປະຕິບັດງານທີ່ກ່ຽວຂ້ອງດັ່ງກ່າວໄວ້ ຢ່າງໜ້ອຍສິບປີ.

**ມາດຕາ 10 ເອກະສານລາຍງານການເງິນ**

ເອກະສານລາຍງານການເງິນຂອງ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ປະກອບດ້ວຍ ໃບສະຫຼຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດລວມ, ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ ແລະ ບົດອະທິບາຍກ່ຽວກັບຫຼັກການ, ວິທີການດ້ານການບັນຊີທີ່ໄດ້ນໍາໃຊ້ ແລະ ອື່ນໆ. ເອກະສານລາຍງານການເງິນ ຕ້ອງຜ່ານການກວດສອບຈາກ ບໍລິສັດກວດສອບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ຫາກເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນແບບແຍກກິດຈະການ ແລະ ລວມກິດຈະການ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ຍື່ນຄໍາຮ້ອງ ແລະ ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃຫ້ແກ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍຫຼັງວັນທີ 30 ມິຖຸນາ ຕ້ອງປະກອບມີ ເອກະສານລາຍງານການເງິນປະຈໍາ ຫົກເດືອນຕົ້ນປີ ຂອງປີທີ່ສະເໜີຂໍອອກຈໍາໜ່າຍຮຸ້ນກູ້ ຊຶ່ງຜ່ານການທົບທວນຈາກບໍລິສັດກວດສອບ.

ກໍລະນີ ມີເຫດການສໍາຄັນເກີດຂຶ້ນພາຍຫຼັງ ວັນທ້າຍງວດຂອງເອກະສານລາຍງານການເງິນສະບັບຫຼ້າສຸດທີ່ຍື່ນໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ບໍລິສັດທີ່ມີຈຸດປະສົງອອກຈໍາ

ໜ່າຍຮຸ້ນກູ້ ຕ້ອງລາຍງານກ່ຽວກັບເຫດການດັ່ງກ່າວເພີ່ມເຕີມ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພ້ອມທັງເປີດເຜີຍໃນໜັງສືຊວນຊື້.

**ມາດຕາ 11 ໜັງສືຊວນຊື້**

ໜັງສືຊວນຊື້ ສຳລັບການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນກ່ຽວກັບ ບໍລິສັດ ເປັນຕົ້ນ ປັດໄຈຄວາມສ່ຽງ, ປະຫວັດການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງທຸລະກິດ;
2. ຂໍ້ມູນກ່ຽວກັບ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະອຳນວຍການ;
3. ຂໍ້ມູນກ່ຽວກັບ ຮຸ້ນກູ້ ເປັນຕົ້ນ ຄຸນລັກສະນະຂອງຮຸ້ນກູ້, ວິທີການສະເໜີຂາຍ, ຈຳນວນ, ມູນຄ່າກຳນົດ, ລາຄາຈຳໜ່າຍ, ໄລຍະເວລາອອກຈຳໜ່າຍຮຸ້ນກູ້ທີ່ຄາດຄະເນໄວ້ ແລະ ເງື່ອນໄຂໃນການໂອນຮຸ້ນກູ້;
4. ແຫຼ່ງທີ່ມາຂອງເງິນ ເພື່ອຊຳລະຕົ້ນທຶນ ແລະ ດອກເບ້ຍ;
5. ຜົນຕອບແທນ ແລະ ແຜນໄຖ່ຖອນຄືນ ເມື່ອຄົບກຳນົດເວລາ;
6. ແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະ ແຜນການເຄື່ອນໄຫວທຸລະກິດ;
7. ບັນຊີລາຍຊື່ຜູ້ມີອຳນາດຄວບຄຸມ;
8. ຂໍ້ມູນກ່ຽວກັບ ຂໍ້ຂັດແຍ່ງທາງດ້ານກົດໝາຍ ແລະ ລາຍການທີ່ກ່ຽວພັນ;
9. ຊື່ ແລະ ທີ່ຢູ່ ຂອງບໍລິສັດກວດສອບ, ບໍລິສັດທີ່ປຶກສາທາງດ້ານກົດໝາຍ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການສະເໜີອອກຈຳໜ່າຍຮຸ້ນກູ້;
10. ຂໍ້ມູນກ່ຽວກັບ ຖານະການເງິນ ຂອງບໍລິສັດສະເໜີອອກຈຳໜ່າຍຮຸ້ນກູ້ ທີ່ຜ່ານການກວດສອບຈາກບໍລິສັດກວດສອບ.

**ມາດຕາ 12 ການຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນແຕ່ລະຄັ້ງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ ຕ້ອງເຮັດສັນຍາຄໍ້າປະກັນ ກັບ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້.

ກໍລະນີ ມີຫຼາຍບໍລິສັດຫຼັກຊັບຮ່ວມກັນຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງມອບໃຫ້ບໍລິສັດຫຼັກຊັບໃດໜຶ່ງ ເປັນຜູ້ຕາງໜ້າເຮັດສັນຍາຄໍ້າປະກັນ ກັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້.

**ມາດຕາ 13 ການຄັດເລືອກເອົາທະນາຄານດູແລຊັບສິນ**

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນແຕ່ລະຄັ້ງ ບໍລິສັດອອກຈຳໜ່າຍຮຸ້ນກູ້ ຕ້ອງຄັດເລືອກເອົາທະນາຄານດູແລຊັບສິນ ພ້ອມທັງເຮັດສັນຍາກັບທະນາຄານດູແລຊັບສິນ ທີ່ໄດ້ຮັບການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເຮັດໜ້າທີ່ເປັນຜູ້ຕິດຕາມ ແລະ ດູແລຜົນປະໂຫຍດຂອງຜູ້ຖືຮຸ້ນກູ້ ທີ່ມີສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບວ່າດ້ວຍທະນາຄານດູແລຊັບສິນ ມາດຕາ 9. ນອກຈາກນັ້ນ ຍັງມີໜ້າທີ່ເພີ່ມເຕີມ ຄື: ຕາງໜ້າທາງດ້ານກົດໝາຍ ໃຫ້ແກ່ຜູ້ຖືຮຸ້ນກູ້ ໃນການຮຽກຮ້ອງຄ່າເສຍຫາຍ ນຳບໍລິສັດອອກຈຳໜ່າຍຮຸ້ນກູ້ ກໍລະນີ ບໍລິສັດດັ່ງກ່າວຫາກບໍ່ຊຳລະຕົ້ນທຶນ ແລະ ດອກເບ້ຍ ໃຫ້ແກ່ຜູ້ຖືຮຸ້ນກູ້ຕາມກຳນົດເວລາ ຫຼື ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນໃບຮຸ້ນກູ້.

**ມາດຕາ 14 ການຈັດລຳດັບຄວາມໜ້າເຊື່ອຖື**

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີການຈັດລຳດັບຄວາມໜ້າເຊື່ອຖື ໂດຍບໍລິສັດຈັດລຳດັບຄວາມໜ້າເຊື່ອຖື.

ກໍລະນີ ບໍລິສັດອອກຈຳໜ່າຍຮຸ້ນກູ້ ມີຈຸດປະສົງໃຊ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຈາກບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຂອງຕ່າງປະເທດ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືດັ່ງກ່າວ ຕ້ອງໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງປະຕິບັດພັນທະອາກອນ ແລະ ພັນທະອື່ນໆ ຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 15 ການຄ້ຳປະກັນການຊຳລະໜີ້**

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີການຄ້ຳປະກັນການຊຳລະໜີ້ ຈາກ ຜູ້ຄ້ຳປະກັນການຊຳລະໜີ້ ໃນກໍລະນີ ບໍ່ມີການຈັດລຳດັບຄວາມໜ້າເຊື່ອຖື ຫຼື ຜົນການຈັດລຳດັບຄວາມໜ້າເຊື່ອຖືຫາກຕ່ຳກວ່າ BBB.

ກໍລະນີ ມີຫຼາຍຜູ້ຄ້ຳປະກັນການຊຳລະໜີ້ຮ່ວມກັນຄ້ຳປະກັນການຊຳລະໜີ້ ຕ້ອງມອບໃຫ້ຜູ້ຄ້ຳປະກັນຊຳລະໜີ້ໃດໜຶ່ງເປັນຜູ້ຕາງໜ້າເຮັດສັນຍາຄ້ຳປະກັນຊຳລະໜີ້ ກັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້.

**ມາດຕາ 16 ການພິຈາລະນາການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີ ຫາກປະຕິເສດ ກໍຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຈາກບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແລະ ຈາກບໍລິສັດກວດສອບ ພ້ອມທັງມີສິດເຊີນ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ, ທີ່ປຶກສາດ້ານການເງິນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອມາປຶກສາຫາລື ພ້ອມດຽວກັນນັ້ນ ກໍ່ຍັງມີສິດໃນການລົງຢ້ຽມຊົມກິດຈະການ ຫຼື ເກັບກຳຂໍ້ມູນຂອງບໍລິສັດ ແລະ ພາກສ່ວນດັ່ງກ່າວ. ບໍລິສັດ ແລະ ພາກສ່ວນດັ່ງກ່າວ ຕ້ອງອຳນວຍຄວາມສະດວກຮອບດ້ານໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 17 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ ສາມາດເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕາມເນື້ອໃນທີ່ໄດ້ລະບຸໄວ້ໃນເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ຍົກເວັ້ນ ຂໍ້ມູນກ່ຽວກັບ ມູນຄ່າຮຸ້ນກູ້ທີ່ຈະອອກ, ຜົນຕອບແທນ, ໄລຍະເວລາ ທີ່ຈະອອກຈຳໜ່າຍ ຫຼື ຂໍ້ມູນອື່ນທີ່ອາດ

ກະທົບຕໍ່ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍ່ອະນຸຍາດໃຫ້ເປີດເຜີຍ.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບແຜນການເປີດເຜີຍຂໍ້ມູນຜ່ານພາຫະນະສື່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບລ່ວງໜ້າຢ່າງໜ້ອຍ ໜຶ່ງວັນລັດຖະການ ກ່ອນວັນເປີດເຜີຍຂໍ້ມູນດັ່ງກ່າວ.

**ມາດຕາ 18 ຄ່າທຳນຽມການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເສຍຄ່າທຳນຽມ ດັ່ງນີ້:

1. ຄ່າຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ຈຳນວນ ສິບຫ້າລ້ານກີບ (15.000.000 ກີບ) ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນຄຳຮ້ອງດັ່ງກ່າວ;
2. ຄ່າໃບອະນຸຍາດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຈຳນວນ ສູນຈຸດສູນສາມສ່ວນຮ້ອຍ (0,03%) ຂອງມູນຄ່າລວມຂອງຮຸ້ນກູ້ທີ່ອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ ສາມສິບລ້ານກີບ (30.000.000 ກີບ) ແລະ ຕ້ອງຊຳລະພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ ສິບລ້ານກີບ (10.000.000 ກີບ) ແລະ ຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງທຸກໆປີ ຍົກເວັ້ນ ປີທີ່ອອກຈຳໜ່າຍຮຸ້ນກູ້ຄັ້ງທຳອິດ.

**ມາດຕາ 19 ຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ບໍລິສັດອອກຈຳໜ່າຍຮຸ້ນກູ້ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ປະກາດກ່ຽວກັບການອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ;
2. ໂຄສະນາການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ;
3. ດຳເນີນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ;
4. ອອກໃບຢັ້ງຢືນການຖືຄອງຮຸ້ນກູ້ໃຫ້ແກ່ຜູ້ຊື້ຮຸ້ນກູ້.

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ ເປັນຕົ້ນໄປ. ກໍລະນີ ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກບໍ່ສຳເລັດຕາມກຳນົດເວລາດັ່ງກ່າວ ບໍລິສັດອອກຈຳໜ່າຍຮຸ້ນກູ້ ສາມາດສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາຈຳໜ່າຍຮຸ້ນກູ້ຕື່ມອີກກໍ່ໄດ້ ແຕ່ບໍ່ໃຫ້ເກີນສາມສິບວັນ ແລະ ຕ້ອງສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ ສາມວັນລັດຖະການ ກ່ອນວັນສິ້ນສຸດກຳນົດເວລາດັ່ງກ່າວ.

ກໍລະນີ ບໍລິສັດອອກຈຳໜ່າຍຮຸ້ນກູ້ ບໍ່ສາມາດອອກຈຳໜ່າຍໄດ້ຕາມຈຳນວນທີ່ໄດ້ຮັບອະນຸມັດໃນເບື້ອງຕົ້ນ ຖ້າຫາກບໍລິສັດດັ່ງກ່າວ ຍັງມີຈຸດປະສົງທີ່ຈະສືບຕໍ່ອອກຈຳໜ່າຍຮຸ້ນກູ້ ເພື່ອໃຫ້ໄດ້ຕາມຈຳນວນທີ່ອະນຸມັດນັ້ນ, ບໍລິສັດດັ່ງກ່າວ ຕ້ອງລາຍງານແຜນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນໃນສ່ວນທີ່ເຫຼືອ ໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາ.

ມາດຕາ 20 ການປະກາດກ່ຽວກັບການອະນຸຍາດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ

ພາຍຫຼັງໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ ຕ້ອງປະກາດກ່ຽວກັບການໄດ້ຮັບອະນຸຍາດດັ່ງກ່າວ ໃຫ້ແກ່ມວນຊົນ ຊາບຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າວັນລັດຖະການ ຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຮັບໃບອະນຸຍາດ ເປັນຕົ້ນໄປ.

ມາດຕາ 21 ການໂຄສະນາການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຜ່ານພາຫະນະສື່ມວນຊົນ

ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເຜີຍແຜ່ໜັງສືຊວນຊື້ຂອງຕົນ ໃຫ້ແກ່ມວນຊົນ ຜ່ານລະບົບເປີດເຜີຍຂໍ້ມູນຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ດຳເນີນການໂຄສະນາການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າວັນຕໍ່ເນື່ອງ ກ່ອນການອອກຈຳໜ່າຍ.

ມາດຕາ 22 ການດຳເນີນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ

ການອອກຈຳໜ່າຍຮຸ້ນກູ້ ສາມາດອອກຈຳໜ່າຍດ້ວຍຮູບແບບ ການປະມູນມູນຄ່າ ຫຼື ການປະມູນດອກເບ້ຍ ຫຼື ວິທີອື່ນ ຕາມການເຫັນດີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງແຈ້ງ ມູນຄ່າ ແລະ ອັດຕາດອກເບ້ຍຂອງຮຸ້ນກູ້ທີ່ຈະອອກຈຳໜ່າຍ ພ້ອມທັງຮູບແບບການປະມູນ ຜ່ານພາຫະນະສື່ມວນຊົນ ໃຫ້ແກ່ຜູ້ລົງທຶນຊາບ ກ່ອນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫຼັງຈາກນັ້ນ ຈຶ່ງດຳເນີນການປະມູນ. ເມື່ອສຳເລັດການປະມູນ ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງຮ່ວມກັບຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ໃຫ້ມວນຊົນ ລາຍງານຜົນການອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ.

ມາດຕາ 23 ການອອກໃບຢັ້ງຢືນການຖືຄອງຮຸ້ນກູ້

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງອອກໃບຢັ້ງຢືນການຖືຄອງຮຸ້ນກູ້ ໃຫ້ແກ່ຜູ້ຊື້ຮຸ້ນກູ້ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ.

ມາດຕາ 24 ການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບການລາຍງານຜົນການອອກຈຳໜ່າຍຮຸ້ນກູ້ ເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງລະບຽບສະບັບນີ້.

ມາດຕາ 25 ການໂອນເງິນທີ່ລະດົມໄດ້

ພາຍຫຼັງໄດ້ຮັບໃບຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນກູ້ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແລ້ວ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງໂອນເງິນທີ່ລະດົມໄດ້ຈາກ ບັນຊີເງິນສະ

ເພາະສຳລັບການເປີດຈອງຊື້ຮຸ້ນກູ້ ເຂົ້າໃນບັນຊີເງິນສະເພາະສຳລັບທຶນທີ່ລະດົມໄດ້ຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ ທີ່ເປີດຢູ່ໃນທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ.

**ມາດຕາ 26 ການນຳໃຊ້ທຶນທີ່ລະດົມໄດ້**

ບໍລິສັດອອກຈຳໜ່າຍຮຸ້ນກູ້ ສາມາດນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ພາຍຫຼັງໄດ້ຮັບໃບຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳເລັດການຂຶ້ນທະບຽນຮຸ້ນກູ້ ເປັນຕົ້ນໄປ.

## ໝວດທີ 3
## ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ

**ມາດຕາ 27 ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ແມ່ນການອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ຜູ້ລົງທຶນ ປະເພດສະຖາບັນ ແລະ ບຸກຄົນທີ່ມີເງື່ອນໄຂຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງເປັນການອອກຈຳໜ່າຍຮຸ້ນກູ້ທີ່ມີຈຳນວນຜູ້ລົງທຶນລວມກັນທັງໝົດບໍ່ເກີນ ໜຶ່ງຮ້ອຍລາຍ ພາຍໃນໄລຍະໜຶ່ງປີ ແລະ ມີອັດຕາສ່ວນການຖືຄອງຮຸ້ນກູ້ຂອງຜູ້ລົງທຶນປະເພດສະຖາບັນ ເທົ່າກັບ ຫຼື ຫຼາຍກວ່າແປດສິບສ່ວນຮ້ອຍ ຂອງຈຳນວນການອອກຈຳໜ່າຍຮຸ້ນກູ້ໃນແຕ່ລະຄັ້ງ.

**ມາດຕາ 28 ເງື່ອນໄຂການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງມີເງື່ອນໄຂຕາມການກຳນົດໄວ້ໃນມາດຕາ 8 ຍົກເວັ້ນ ຂໍ້ 2 ຂອງລະບຽບສະບັບນີ້. ນອກນັ້ນ ຕ້ອງມີເງື່ອນໄຂເພີ່ມເຕີມ ຄື: ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວຢ່າງໜ້ອຍໜຶ່ງປີ.

**ມາດຕາ 29 ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມການກຳນົດໄວ້ໃນ ມາດຕາ 9 ຍົກເວັ້ນ ຂໍ້ 10 ຂອງລະບຽບສະບັບນີ້.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ ຕ້ອງຮ່ວມກັບທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດໃນແຕ່ລະຄັ້ງ ຊຶ່ງຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງເກັບຮັກສາເອກະສານປະຕິບັດງານ ທີ່ກ່ຽວຂ້ອງດັ່ງກ່າວໄວ້ຢ່າງໜ້ອຍ ສິບປີ.

**ມາດຕາ 30 ຄ່າທຳນຽມການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງເສຍຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂໍ້ 1 ແລະ 3 ຂອງລະບຽບສະບັບນີ້. ນອກນັ້ນ ຕ້ອງເສຍຄ່າທຳນຽມເພີ່ມເຕີມ ຄື: ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຈຳນວນ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າຮຸ້ນກູ້ທີ່ສະເໜີອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ ສາມສິບລ້ານກີບ (30.000.000 ກີບ) ແລະ ຕ້ອງຊຳ

ລະພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ເປັນຕົ້ນໄປ.

**ມາດຕາ 31 ຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ພາຍຫຼັງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ແກ່ເປົ້າໝາຍຜູ້ລົງທຶນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ໂຄສະນາການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ;
2. ດຳເນີນການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ;
3. ອອກໃບຢັ້ງຢືນການຖືຄອງຮຸ້ນກູ້ໃຫ້ແກ່ຜູ້ຊື້ຮຸ້ນກູ້.

ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ ເປັນຕົ້ນໄປ. ກໍລະນີ ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ບໍ່ສຳເລັດຕາມກຳນົດເວລາດັ່ງກ່າວ ບໍລິສັດອອກຈຳໜ່າຍຮຸ້ນກູ້ ສາມາດສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາອອກຈຳໜ່າຍຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນສາມສິບວັນ ແລະ ຕ້ອງສະເໜີມາຍັງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ ສາມວັນລັດຖະການ ກ່ອນວັນສິ້ນສຸດກຳນົດເວລາດັ່ງກ່າວ.

**ມາດຕາ 32 ການນຳໃຊ້ບົດບັນຍັດຂອງການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ນອກຈາກບົດບັນຍັດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນໝວດນີ້ ການກະກຽມເອກະສານລາຍງານການເງິນ, ໜັງສືຊວນຊື້, ການຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້, ການຄັດເລືອກເອົາທະນາຄານດູແລຊັບສິນ, ການຈັດລຳດັບຄວາມໜ້າເຊື່ອຖື, ການຄ້ຳປະກັນການຊຳລະໜີ້, ການພິຈາລະນາການຂໍອອກຈຳໜ່າຍຮຸ້ນກູ້, ການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ ແລະ ການນຳໃຊ້ທຶນທີ່ລະດົມໄດ້ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນບົດບັນຍັດຂອງ ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ທີ່ໄດ້ລະບຸໄວ້ໃນໝວດທີ 2 ຂອງລະບຽບສະບັບນີ້.

## ໝວດທີ 4
## ການຂຶ້ນທະບຽນ, ຮັບຝາກ, ຊື້-ຂາຍຮຸ້ນກູ້ ແລະ ຂໍ້ຫ້າມ

**ມາດຕາ 33 ການຂຶ້ນທະບຽນ ແລະ ຮັບຝາກຮຸ້ນກູ້**

ບໍລິສັດອອກຈຳໜ່າຍຮຸ້ນກູ້ ທີ່ອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແລະ ໃນວົງຈຳກັດ ຕ້ອງເອົາໃບຮຸ້ນກູ້ໄປຂຶ້ນທະບຽນ ແລະ ຝາກໄວ້ໃນສູນຮັບຝາກຫຼັກຊັບ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຢັ້ງຢືນການອອກຈຳໜ່າຍຮຸ້ນກູ້ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

ມາດຕາ 34 ການຊື້-ຂາຍ ຮຸ້ນກູ້ ໃນຕະຫຼາດຂັ້ນສອງ

ຮຸ້ນກູ້ທີ່ອອກຈຳໜ່າຍໃຫ້ແກ່ມວນຊົນ ຕ້ອງຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສາມາດຊື້-ຂາຍ ໂດຍປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນ ຕາມການກຳນົດໄວ້ໃນລະບຽບການສະເພາະຂອງຕະຫຼາດຫຼັກຊັບ.

ມາດຕາ 35 ຂໍ້ຫ້າມ

ຫ້າມບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ທະນາຄານທຸລະກິດ, ຜູ້ປະເມີນຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈຳໜ່າຍຮຸ້ນກູ້ ມີພຶດຕິກຳໃດໜຶ່ງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບມາດຕາ 135 ແລະ 136.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດອອກຈຳໜ່າຍຮຸ້ນກູ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ທະນາຄານດູແລຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈຳໜ່າຍຮຸ້ນກູ້ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ທະນາຄານດູແລຊັບສິນ, ທະນາຄານທຸລະກິດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈຳໜ່າຍຮຸ້ນກູ້ທີ່ລະເມີດລະບຽບສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 166, 167, 168, 169 ແລະ 170 ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

ມາດຕາ 38 ການຈັດຕັ້ງປະຕິບັດ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ທະນາຄານດູແລຊັບສິນ, ທະນາຄານທຸລະກິດ, ຜູ້ປະເມີນຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ

ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈຳໜ່າຍຮຸ້ນກູ້ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 39 ຜົນສັກສິດ**

ລະບຽບສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ປະທານ

ດຣ.ບຸນປອນ ບຸດຕະນະວົງ